15.02.2017

**ສາທາລະນະລັດປະຊາທິປະໄຕປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ............../ສພຊ

ນະຄອນຫຼວງວຽງຈັນ, ວັນທີ...................

# (ຮ່າງ)

# ກົດໝາຍ

# ວ່າດ້ວຍການປົກປ້ອງອຸດສາຫະກຳພາຍໃນ

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ , ການຕິດຕາມກວດກາ ແລະ ການນຳໃຊ້ມາດຕະການເພື່ອປົກປ້ອງອຸດສາຫະກຳພາຍໃນພາຍໃຕ້ເງື່ອນໄຂການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ ແນໃສ່ສ້າງເງື່ອນໄຂໃຫ້ອຸດສາຫະກຳພາຍໃນໄດ້ປັບປຸງຕົນເອງໃຫ້ມີຄວາມເຂັ້ມແຂງ, ສາມາດແຂ່ງຂັນກັບສິນຄ້ານຳເຂົ້າ ແລະ ເຕີບໃຫຍ່ຂະຫຍາຍຕົວ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ2 ການປົກປ້ອງອຸດສາຫະກຳພາຍໃນ**

ການປົກປ້ອງອຸດສາຫະກຳພາຍໃນ ແມ່ນການນຳໃຊ້ມາດຕະການທາງດ້ານພາສີ ຫຼື ການກຳນົດປະລິມານການນຳເຂົ້າ ໃນໄລຍະເວລາໃດໜຶ່ງ ຕາມການຕົກລົງຂອງລັດຖະບານເພື່ອປົກປ້ອງອຸດສາຫະກຳພາຍໃນທີ່ໄດ້ຮັບຄວາມເສຍຫາຍຮ້າຍແຮງ ຫຼື ມີໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຮ້າຍແຮງ ຈາກການນຳເຂົ້າສິນຄ້າຢ່າງຫຼວງຫຼາຍນັ້ນໃຫ້ສາມາດປັບປຸງຕົນເອງ ແລະ ແຂ່ງຂັນໄດ້.

**ມາດຕາ3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການນຳເຂົ້າສິນຄ້າທີ່ເພີ່ມຂຶ້ນ** ໝາຍເຖິງ ການນຳເຂົ້າສິນຄ້າປະເພດໃດໜຶ່ງໃນປະລິມານທີ່ເພີ່ມຂຶ້ນແບບເດັດຖານແລະ ທຽບຖານໂດຍປຽບທຽບລະຫວ່າງປະລິມານສິນຄ້າທີ່ຄ້າຍຄືກັນ ຫຼື ສິນຄ້າທີ່ແຂ່ງຂັນໂດຍກົງທີ່ຜະລິດໃນສປປລາວ;
2. **ອຸດສາຫະກຳພາຍໃນ** ໝາຍເຖິງ ຜູ້ຜະລິດສິນຄ້າທີ່ຄ້າຍຄືກັນ ຫຼື ສິນຄ້າທີ່ແຂ່ງຂັນໂດຍກົງໃນສປປ ລາວ ຂອງໜຶ່ງ ຫຼື ຫຼາຍຜູ້ຜະລິດ ທີ່ລວມກັນແລ້ວມີປະລິມານກວມເອົາອັດຕາສ່ວນທີ່ສຳຄັນ ຂອງປະລິມານການຜະລິດສິນຄ້າພາຍໃນ;

**3. ສິນຄ້າທີ່ຄ້າຍຄືກັນ**ໝາຍເຖິງ ສິນຄ້ານຳເຂົ້າທີ່ມີຄຸນລັກສະນະສະເພາະພື້ນຖານທີ່ຄືກັນ ຫຼື ຄ້າຍຄືກັນກັບສິນຄ້າທີ່ຜະລິດໃນ ສປປ ລາວ ເປັນຕົ້ນການປະຕິບັດງານການນຳໃຊ້, ຄຸນນະພາບ, ອົງປະກອບດ້ານເຕັກນິກ ແລະ ຢູ່ໃນກຸ່ມສິນຄ້າປະເພດດຽວກັນ

**4. ສິນຄ້າທີ່ແຂ່ງຂັນໂດຍກົງ**ໝາຍເຖິງສິນຄ້ານຳເຂົ້າ ທີ່ສາມາດໃຊ້ປ່ຽນແທນສິນຄ້າທີ່ຜະລິດພາຍໃນ;

5. **ຄວາມເສຍຫາຍຮ້າຍແຮງ** ໝາຍເຖິງຄວາມເສຍຫາຍໂດຍລວມທີ່ສຳຄັນຕໍ່ອຸດສາຫະກຳພາຍໃນ;

6. **ໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຮ້າຍແຮງ**ໝາຍເຖິງຄວາມເສຍຫາຍຮ້າຍແຮງທີ່ໃກ້ຈະເກີດຂຶ້ນກັບອຸດສາຫະກຳພາຍໃນຢ່າງຈະແຈ້ງ;

7. **ການສືບສວນກ່ຽວກັບຄວາມເສຍຫາຍຂອງອຸດສາຫະກຳພາຍໃນ**ໝາຍເຖິງ ການຊອກຫາຄວາມເສຍຫາຍຂອງອຸດສາຫະກຳພາຍໃນ ຍ້ອນການນຳເຂົ້າສິນຄ້າເພີ່ມຂຶ້ນຢ່າງຫຼວງຫຼາຍຜິດປົກກະຕິ;

8. **ພາກສ່ວນທີ່ກ່ຽວຂ້ອງ** ໝາຍເຖິງຜູ້ສົ່ງອອກ, ຜູ້ນຳເຂົ້າ ແລະ ລັດຖະບານ ຂອງປະເທດສົ່ງອອກສິນຄ້າ ທີ່ສ້າງຄວາມເສຍຫາຍ ຕໍ່ອຸດສາຫະກຳພາຍໃນ , ຜູ້ຜະລິດພາຍໃນ ,ກຸ່ມ ຫຼື ສະມາຄົມ ທີ່ຜະລິດສິນຄ້າທີ່ຄ້າຍຄືກັນ ຫຼື ສິນຄ້າທີ່ແຂ່ງຂັນໂດຍກົງກັບສິນຄ້ານຳເຂົ້າ ,ສະຫະພັນກຳມະບານ ຫຼື ການຈັດຕັ້ງອື່ນທີ່ເປັນຕົວແທນປົກປ້ອງຜົນປະໂຫຍດຂອງກຳມະກອນໃນອຸດສາຫະກຳພາຍໃນ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານການປົກປ້ອງອຸດສາຫະກຳພາຍໃນ**

ລັດຊຸກຍູ້ ສົ່ງເສີມ ວຽກງານການປົກປ້ອງອຸດສາຫະກຳພາຍໃນ ທີ່ໄດ້ຮັບຜົນກະທົບຈາກສິນຄ້ານຳເຂົ້າດ້ວຍການວາງນະໂຍບາຍ, ກົດໝາຍ ແລະ ລະບຽບການ ທີ່ສອດຄ່ອງກັບລະບຽບການສາກົນ ເພື່ອສ້າງສະພາບແວດລ້ອມ ແລະ ເງື່ອນໄຂທີ່ເອື້ອອຳນວຍໃຫ້ແກ່ອຸດສາຫະກຳພາຍໃນ ສາມາດປັບຕົວ ແລະ ແຂ່ງຂັນກັບສິນຄ້ານຳເຂົ້າໃນໄລຍະເວລາໃດໜຶ່ງ.

**ມາດຕາ5 ຫຼັກການກ່ຽວກັບການປົກປ້ອງອຸດສາຫະກຳພາຍໃນ**

ໃນການປົກປ້ອງອຸດສາຫະກຳພາຍໃນທີ່ໄດ້ຮັບຜົນກະທົບຈາກສິນຄ້ານຳເຂົ້າໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງກັບນະໂຍບາຍ, ກົດໝາຍແລະລະບຽບການ;
2. ຮັບປະກັນຄວາມໂປ່ງໃສ, ພາວະວິໄສ ແລະ ຍຸຕິທຳ;
3. ບໍ່ຈຳແນກປະຕິບັດ;
4. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

**ມາດຕາ6 ຂອບເຂດການນຳໃຊ້**

ກົດໝາຍສະບັບນີ້ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ດຳເນີນການຜະລິດ ຫຼື ນຳເຂົ້າສິນຄ້າ.

**ມາດຕາ7 ການຮ່ວມມືສາກົນ**

ລັດສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບ ການປົກປ້ອງອຸດສາຫະກຳພາຍໃນທີ່ໄດ້ຮັບຜົນກະທົບຈາກສິນຄ້ານຳເຂົ້າດ້ວຍການແລກປ່ຽນຂໍ້ມູນຂ່າວສານ,ເຕັກໂນໂລຊີເຕັກນິກວິທະຍາສາດ, ການຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາການ ເພື່ອເຮັດ

ໃຫ້ອົງການດັ່ງກ່າວມີປະສິດທິຜົນ ແລະ ປະຕິບັດຕາມ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວເປັນພາຄີ.

# ພາກທີ II
# ຄວາມເສຍຫາຍຂອງອຸດສາຫະກຳພາຍໃນ

**ມາດຕາ8 ຄວາມເສຍຫາຍຂອງອຸດສາຫະກຳພາຍໃນ**

ຄວາມເສຍຫາຍຂອງອຸດສາຫະກາພາຍໃນ ແມ່ນຄວາມເສຍຫາຍທີ່ເກີດຂຶ້ນ ຈາກການນຳເຂົ້າສິນຄ້າທີ່ເພີ່ມຂຶ້ນຢ່າງຫຼວງຫຼາຍແບບເດັດຖານ ແລະ ທຽບຖານ ຊຶ່ງເຮັດໃຫ້ອຸດສາຫະກຳພາຍໃນໄດ້ຮັບຄວາມເສຍຫາຍຮ້າຍແຮງ ຫຼື ມີໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຮ້າຍແຮງ.

**ມາດຕາ 9 ການການົດຄວາມເສຍຫາຍຮ້າຍແຮງ**

ໃນການກຳນົດຄວາມເສຍຫາຍຮ້າຍແຮງຕໍ່ອຸດສາຫະກຳພາຍໃນໃຫ້ພິຈາລະນາປັດໄຈທັງໝົດທີ່ກ່ຽວຂ້ອງ ໂດຍສະເພາະບັນດາປັດໄຈ ດັ່ງນີ້:

1. ອັດຕາ ແລະ ປະລິມານການນຳເຂົ້າສິນຄ້າທີ່ເພີ່ມຂຶ້ນຢ່າງເດັດຖານ ແລະ ທຽບຖານ;
2. ສ່ວນແບ່ງຕະຫຼາດຂອງອຸດສາຫະກຳພາຍໃນຫຼຸດລົງ;
3. ການປ່ຽນແປງຂອງລະດັບການຂາຍ;
4. ການປ່ຽນແປງຂອງລະດັບຜົນຜະລິດ;
5. ການປ່ຽນແປງຂອງລະດັບຜະລິດຕະພາບ;
6. ການປ່ຽນແປງຂອງລະດັບກຳລັງການຜະລິດ;
7. ການປ່ຽນແປງຂອງລະດັບກຳໄລ ແລະ ຂາດທຶນ;
8. ການປ່ຽນແປງຂອງລະດັບການຈ້າງງານ;
9. ປັດໄຈອື່ນທີ່ກ່ຽວຂ້ອງ.

ຄວາມເສຍຫາຍທີ່ເກີດຈາກປັດໄຈອື່ນທີ່ບໍ່ແມ່ນຍ້ອນການນຳເຂົ້າສິນຄ້າ ທີ່ເພີ່ມຂຶ້ນ ບໍ່ຖືວ່າເປັນປັດໄຈຂອງຄວາມເສຍຫາຍຮ້າຍແຮງ.

**ມາດຕາ 10 ການການົດໄພຂົ່ມຂູ່ທີ່ຈະສ້າງຄວາມເສຍຫາຍຮ້າຍແຮງ**

ໃນການກຳນົດໄພຂົ່ມຂູ່ທີ່ຈະສ້າງຄວາມເສຍຫາຍຮ້າຍແຮງຕໍ່ອຸດສາຫະກຳພາຍໃນ ໃຫ້ອີງໃສ່ບັນດາປັດໄຈທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້.

# ພາກທີ III
# ການສືບສວນກ່ຽວກັບຄວາມເສຍຫາຍຂອງອຸດສາຫະກຳພາຍໃນ

**ມາດຕາ 11 ການສືບສວນກ່ຽວກັບຄວາມເສຍຫາຍຂອງອຸດສາຫະກາພາຍໃນ**

ການສືບສວນກ່ຽວກັບຄວາມເສຍຫາຍຂອງອຸດສາຫະກຳພາຍໃນ ຈະດຳເນີນໄດ້ກໍຕໍ່ເມື່ອມີສາເຫດໃດໜຶ່ງທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້ ແລະ ມີຈຸດປະສົງຊອກຫາຂໍ້ມູນຫຼັກຖານມາຢັ້ງຢືນວ່າການນຳເຂົ້າສິນຄ້າທີ່ເພີ່ມຂຶ້ນນັ້ນ ເຮັດໃຫ້ອຸດສາຫະກຳພາຍໃນໄດ້ຮັບຄວາມເສຍຫາຍຮ້າຍແຮງ ຫຼື ມີໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຮ້າຍແຮງ.

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ດຳເນີນການສືບສວນກ່ຽວກັບຄວາມເສຍຫາຍຂອງອຸດສາຫະກຳພາຍໃນ ເພື່ອສະເໜີລັດຖະບານພິຈາລະນານຳໃຊ້ມາດຕະການປົກປ້ອງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 12 ສາເຫດຂອງການສືບສວນ**

ສາເຫດທີ່ພາໃຫ້ມີການສືບສວນກ່ຽວກັບ ຄວາມເສຍຫາຍຂອງອຸດສາຫະກຳພາຍໃນມີດັ່ງນີ້:

1. ມີຄຳຮ້ອງຂອງອຸດສາຫະກຳພາຍໃນ ຫຼື ຜູ້ຕາງໜ້າອຸດສາຫະກຳພາຍໃນ;
2. ມີການພົບເຫັນຂໍ້ມູນ ຫຼື ຫຼັກຖານ ກ່ຽວກັບ ຄວາມເສຍຫາຍຂອງອຸດສາຫະກຳພາຍໃນ ໂດຍເຈົ້າໜ້າທີ່ສືບສວນ.

**ມາດຕາ 13 ຄຳຮ້ອງຂອງອຸດສາຫະກຳພາຍໃນຫຼື ຜູ້ຕາງໜ້າອຸດສາຫະກຳພາຍໃນ**

ອຸດສາຫະກຳພາຍໃນທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ ສາມາດຍື່ນຄຳຮ້ອງຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອດຳເນີນການສືບສວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງກົດໝາຍສະບັບນີ້.

ຄຳຮ້ອງ ຕ້ອງປະກອບຕາມແບບພິມ ທີ່ກະຊວງອຸດສາຫະກາ ແລະ ການຄ້າ ການົດໄວ້ຊຶ່ງມີເນື້ອໃນຕົ້ນຕໍດັ່ງນີ້:

1. ຈຸດປະສົງ;
2. ຂໍ້ມູນຂອງຜູ້ຮ້ອງຂໍ;
3. ທີ່ຕັ້ງສຳນັກງານ ແລະ ສະຖານທີ່ຜະລິດ ຂອງຜູ້ຮ້ອງຂໍ;
4. ຂໍ້ມູນກ່ຽວກັບສິນຄ້ານຳເຂົ້າທີ່ເພີ່ມຂຶ້ນ;
5. ຂໍ້ມູນກ່ຽວກັບຜູ້ຜະລິດ, ຜູ້ສົ່ງອອກ ແລະ ຜູ້ນຳເຂົ້າ;
6. ຂໍ້ມູນກ່ຽວກັບຄວາມເສຍຫາຍຮ້າຍແຮງ ຫຼື ກ່ຽວກັບໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຮ້າຍແຮງ;
7. ຄວາມກ່ຽວພັນລະຫວ່າງການນຳເຂົ້າທີ່ເພີ່ມຂຶ້ນ ກັບຄວາມເສຍຫາຍຮ້າຍແຮງ ຫຼື ໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຮ້າຍແຮງ;
8. ແຜນປັບຕົວຂອງອຸດສາຫະກຳພາຍໃນ.

**ມາດຕາ 14 ການພົບເຫັນຂໍ້ມູນຫຼັກຖານ ໂດຍເຈົ້າໜ້າທີ່ສືບສວນ**

ເມື່ອພົບເຫັນຂໍ້ມູນຫຼັກຖານ ທີ່ຊີ້ໃຫ້ເຫັນການນາເຂົ້າສິນຄ້າທີ່ເພີ່ມຂຶ້ນຢ່າງຫຼວງຫຼາຍ ຊຶ່ງໄດ້ສ້າງຄວາມເສຍຫາຍຮ້າຍແຮງ ຫຼື ມີໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຮ້າຍແຮງ ເຈົ້າໜ້າທີ່ສືບສວນ ຕ້ອງເກັບກຳຂໍ້ມູນໃນເບື້ອງຕົ້ນ ແລະ ບັນທຶກເຫດການ ແລ້ວລາຍງານຕໍ່ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາອອກຂໍ້ຕົກລົງໃຫ້ດຳເນີນການສືບສວນ.

**ມາດຕາ 15 ຂັ້ນຕອນການດຳເນີນ ການສືບສວນ**

ການດາເນີນການສືບສວນ ປະກອບ ດ້ວຍຂັ້ນຕອນດັ່ງນີ້:

1. ການພິຈາລະນາຂໍ້ມູນເບື້ອງຕົ້ນ;
2. ການອອກຂໍ້ຕົກລົງໃຫ້ດຳເນີນການສືບສວນ;
3. ການດຳເນີນການສືບສວນ;
4. ການສະຫຼຸບ ແລະ ລາຍງານຜົນການສືບສວນ.

**ມາດຕາ 16 ການພິຈາລະນາຂໍ້ມູນເບື້ອງຕົ້ນ**

ການພິຈາລະນາຂໍ້ມູນເບື້ອງຕົ້ນແມ່ນການກວດກາຂອງເຈົ້າໜ້າທີ່ສືບສວນ ກ່ຽວກັບຄວາມຖືກຕ້ອງ ຄົບຖ້ວນຂອງຄຳຮ້ອງ ແລະ ເອກະສານອື່ນ ທີ່ໄດ້ຮັບຈາກ ອຸດສາຫະກຳພາຍໃນ ຫຼື ຜູ້ຕາງໜ້າອຸດສາຫະກຳພາຍໃນກ່ຽວກັບຄວາມເສຍຫາຍຂອງອຸດສາຫະກຳພາຍໃນ.

ການສືບສວນຂໍ້ມູນເບື້ອງຕົ້ນ ຕ້ອງໃຫ້ສຳເລັດພາຍໃນກຳນົດເວລາສາມສິບວັນນັບແຕ່ວັນໄດ້ຮັບຄຳຮ້ອງຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ. ໃນກໍລະນີເອກະສານບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ເຈົ້າໜ້າທີ່ສືບສວນຕ້ອງແຈ້ງໃຫ້ຜູ້ຮ້ອງຂໍ ພາຍໃນກຳນົດເວລາຫ້າວັນລັດຖະການ ເພື່ອໃຫ້ສະໜອງຂໍ້ມູນເພີ່ມເຕີມ ພາຍໃນກຳນົດເວລາສາມສິບວັນ ນັບແຕ່ວັນທີ່ໄດ້ຮັບແຈ້ງເປັນຕົ້ນໄປ. ຖ້າຫາກຜູ້ຮ້ອງຂໍບໍ່ສາມາດສະໜອງຂໍ້ມູນເພີ່ມຕື່ມພາຍໃນກຳນົດເວລາ ສາມສິບວັນນັ້ນ ເຈົ້າໜ້າທີ່ສືບສວນ ຈະບໍ່ດຳເນີນການສືບສວນ.

ໃນກໍລະນີ ບໍ່ສາມາດສາເລັດການສືບສວນຂໍ້ມູນເບື້ອງຕົ້ນພາຍໃນກຳນົດເວລາສາມສິບວັນດັ່ງກ່າວ ເຈົ້າໜ້າທີ່ສືບສວນ ສາມາດສະເໜີຕໍ່ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຕໍ່ເວລາຕື່ມອີກ ແຕ່ສູງສຸດບໍ່ເກີນສາມສິບວັນ.

**ມາດຕາ 17 ການອອກຂໍ້ຕົກລົງໃຫ້ດຳເນີນການສືບສວນ**

ພາຍຫຼັງໄດ້ຮັບບົດລາຍງານຈາກເຈົ້າໜ້າທີ່ສືບສວນ ກ່ຽວກັບຜົນການພິຈາລະນາຂໍ້ມູນເບື້ອງຕົ້ນ , ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງພິຈາລະນາອອກຂໍ້ຕົກລົງກ່ຽວກັບການດຳເນີນການສືບສວນພາຍໃນສິບຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບບົດລາຍງານເປັນຕົ້ນໄປ.

ພາຍຫຼັງອອກຂໍ້ຕົກລົງໃຫ້ດຳເນີນການສືບສວນ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບ.

**ມາດຕາ 18 ການດຳເນີນການສືບສວນ**

ຫຼັງຈາກມີຂໍ້ຕົກລົງໃຫ້ດຳເນີນການສືບສວນ ເຈົ້າໜ້າທີ່ສືບສວນ ຕ້ອງດຳເນີນການສືບສວນ ໃຫ້ສຳເລັດຢ່າງຊ້າບໍ່ໃຫ້ເກີນຮ້ອຍແປດສິບວັນ ນັບແຕ່ວັນໄດ້ອອກຂໍ້ຕົກລົງ. ໃນກໍລະນີຈຳເປັນ , ເຈົ້າໜ້າທີ່ສືບສວນສາມາດສະເໜີລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຕໍ່ເວລາຕື່ມອີກ ແຕ່ສູງສຸດບໍ່ໃຫ້ເກີນຫົກສິບວັນ.

ການດຳເນີນການສືບສວນຕ້ອງປະຕິບັດ ດັ່ງນີ້:

1. ແຈ້ງໃຫ້ປະເທດສົ່ງອອກ, ຜູ້ຮ້ອງຂໍ, ອົງການການຄ້າໂລກ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຮັບຊາບ ກ່ອນດຳເນີນການສືບສວນ;
2. ເຜີຍແຜ່ຂໍ້ຕົກລົງໃຫ້ດຳເນີນການສືບສວນ ໃນສື່ໃດໜຶ່ງ ເພື່ອໃຫ້ສັງຄົມຮັບຊາບຢ່າງກວ້າງຂວາງ;
3. ຕ້ອງມີການປຶກສາຫາລື ຫຼື ນຳໃຊ້ວິທີການອື່ນ ທີ່ເໝາະສົມ ກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການນຳໃຊ້ມາດຕະການປົກປ້ອງ ເພື່ອຮັບປະກັນຜົນປະໂຫຍດຂອງສາທາລະນະ;

4. ເຈົ້າໜ້າທີ່ສືບສວນດຳເນີນການສືບສວນ ແລະ ເກັບກຳຂໍ້ມູນຢູ່ສະຖານທີ່ຕ່າງໆທີ່ກ່ຽວຂ້ອງ ເພື່ອຢັ້ງຢືນຄວາມຖືກຕ້ອງ ແລະ ຄວາມເປັນຈິງ ກ່ຽວກັບຄວາມເສຍຫາຍຂອງອຸດສາຫະກຳພາຍໃນ.

**ມາດຕາ 19 ການສະຫຼຸບ ແລະ ລາຍງານຜົນການສືບສວນ**

ພາຍຫຼັງໄດ້ສຳເລັດການສືບສວນແລ້ວ ເຈົ້າໜ້າທີ່ສືບສວນ ຕ້ອງສະຫຼຸບ ແລະ ລາຍງານຜົນການສືບສວນ ພ້ອມດ້ວຍຂໍ້ມູນຫຼັກຖານທັງໝົດທີ່ເກັບກຳໄດ້ ຕໍ່ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າເພື່ອນຳສະເໜີຕໍ່ລັດຖະບານພິຈາລະນາອອກຂໍ້ຕົກລົງນຳໃຊ້ ຫຼື ບໍ່ນຳໃຊ້ມາດຕະການປົກປ້ອງ.

**ມາດຕາ 20 ການຍົກເລີກການດຳເນີນການສືບສວນ**

ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ມີສິດອອກຂໍ້ຕົກລົງໃຫ້ຍົກເລີກການດຳເນີນການສືບສວນໃນກໍລະນີດັ່ງນີ້:

1. ຜູ້ຮ້ອງຂໍ ຖອນຄຳຮ້ອງຂອງຕົນ;

2. ການສືບສວນເບື້ອງຕົ້ນເຫັນວ່າບໍ່ມີຄວາມກ່ຽວພັນລະຫວ່າງການນຳເຂົ້າສິນຄ້າທີ່ເພີ່ມຂຶ້ນກັບ ຄວາມເສຍຫາຍຮ້າຍແຮງ ຫຼື ໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຮ້າຍແຮງ;

3. ເຫດຜົນອື່ນທີ່ລັດຖະບານເຫັນວ່າມີຄວາມຈຳເປັນ.

ພາຍຫຼັງອອກຂໍ້ຕົກລົງໃຫ້ຍົກເລີກການດຳເນີນການສືບສວນແລ້ວກະຊວງອຸດສາຫະກຳ ແລະ ການຄ້າຕ້ອງແຈ້ງໃຫ້ອົງການການຄ້າໂລກ ແລະ ພາກກ່ຽວຂ້ອງ ພ້ອມທັງເຜີຍແຜ່ໃຫ້ສັງຄົມຊາບ.

**ມາດຕາ 21 ການຮັກສາຂໍ້ມູນທີ່ເປັນຄວາມລັບ**

ເຈົ້າໜ້າທີ່ສືບສວນ ຕ້ອງເກັບຮັກສາຂໍ້ມູນທີ່ເປັນຄວາມລັບ ທີ່ບຸກຄົນ , ນິຕິບຸກຄົນ ຫຼື ການຈັດຕັ້ງໄດ້ສະໜອງໃຫ້ເພື່ອນຳໃຊ້ເປັນຂໍ້ມູນໃນການສືບສວນຄວາມເສຍຫາຍຂອງອຸດສາຫະກຳພາຍໃນແລະ ບໍ່ສາມາດເຜີຍແຜ່ຕໍ່ສາທາລະນະຊົນໄດ້ຖ້າບໍ່ໄດ້ຮັບອະນຸຍາດຈາກຜູ້ສະໜອງຂໍ້ມູນ.

ເຈົ້າໜ້າທີ່ສືບສວນອາດຮ້ອງຂໍໃຫ້ຜູ້ສະໜອງຂໍ້ມູນສະຫຼຸບຫຍໍ້ຂໍ້ມູນທີ່ບໍ່ເປັນຄວາມລັບ ແຕ່ຖ້າບໍ່ສາມາດສະຫຼຸບຫຍໍ້ໄດ້ກໍຕ້ອງໃຫ້ເຫດຜົນ.

ຖ້າເຈົ້າໜ້າທີ່ສືບສວນຫາກເຫັນວ່າການຮ້ອງຂໍຂໍ້ມູນທີ່ເປັນຄວາມລັບນັ້ນບໍ່ມີເຫດຜົນພຽງພໍ ແລະ ຜູ້ສະໜອງຂໍ້ມູນບໍ່ຕ້ອງການເປີດເຜີຍຕໍ່ສາທາລະນະ ເຈົ້າໜ້າທີ່ສືບສວນອາດ ບໍ່ນຳເອົາຂໍ້ມູນນັ້ນມາປະກອບການພິຈາລະນາ ເວັ້ນເສຍແຕ່ໄດ້ພິສູດວ່າຂໍ້ມູນນັ້ນເປັນຂໍ້ມູນທີ່ຖືກຕ້ອງ.

**ມາດຕາ 22 ຄວາມຮັບຜິດຊອບຄ່າໃຊ້ຈ່າຍໃນການດຳເນີນການສືບສວນ**

ຄ່າໃຊ້ຈ່າຍໃນການດຳເນີນການສືບສວນຕາມສາເຫດ ທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂໍ້ 1ຂອງກົດໝາຍສະບັບນີ້ແມ່ນຜູ້ຮ້ອງຂໍ ເປັນຜູ້ຮັບຜິດຊອບ.ສຳລັບຄ່າໃຊ້ຈ່າຍໃນການດຳເນີນການສືບສວນຕາມສາເຫດ ທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂໍ້ 2ຂອງກົດໝາຍສະບັບນີ້ ໃຫ້ນຳໃຊ້ງົບປະມານຂອງລັດ.

**ມາດຕາ 23 ເຈົ້າໜ້າທີ່ສືບສວນ**

ເຈົ້າໜ້າທີ່ສືບສວນ ແມ່ນພະນັກງານລັດຖະກອນທີ່ໄດ້ຮັບການແຕ່ງຕັ້ງ ໂດຍລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຮັບຜິດຊອບວຽກງານສືບສວນ ຄວາມເສຍຫາຍຂອງອຸດສາຫະກຳພາຍໃນ ຕາມທີ່ໄດ້ກຳນົດໃນກົດໝາຍສະບັບນີ້.

**ມາດຕາ 24 ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ສືບສວນ**

ເຈົ້າໜ້າທີ່ສືບສວນມີສິດ ແລະ ໜ້າທີ່ດັ່ງນີ້:

1. ເກັບກຳ ແລະ ວິເຄາະຂໍ້ມູນກ່ຽວກັບ ຄວາມເສຍຫາຍຂອງອຸດສາຫະກຳພາຍໃນ ທີ່ເກີດຈາກການນຳເຂົ້າສິນຄ້າທີ່ເພີ່ມຂຶ້ນ;
2. ສະເໜີລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ນຳໃຊ້ມາດຕະການປົກປ້ອງອຸດສາຫະກຳພາຍໃນ;
3. ເຂົ້າກວດກາສະຖານທີ່ ຫຼື ຮຽກເອົາຂໍ້ມູນຈາກຜູ້ນຳເຂົ້າ ແລະ ຜູ້ຜະລິດພາຍໃນ ທີ່ຕິດພັນກັບຄວາມເສຍຫາຍຂອງອຸດສາຫະກຳພາຍໃນ;
4. ດຳເນີນການສືບສວນ ຕາມຂັ້ນຕອນທີ່ກຳນົດໄວ້ໃນກົດໝາຍສະບັບນີ້;
5. ກຳນົດໄລຍະເວລາຂອງການປະຕິບັດມາດຕະການປົກປ້ອງ ຫຼືການຂະຫຍາຍໄລຍະເວລາດັ່ງກ່າວ;
6. ລາຍງານຜົນການສືບສວນເບື້ອງຕົ້ນ ແລະ ສຸດທ້າຍ ກ່ຽວກັບການກຳນົດຂອງເສຍຫາຍຮ້າຍແຮງຂອງອຸດສາຫະກຳພາຍໃນ ຕໍ່ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ;
7. ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງລັດຖະມົນຕີ.

## ພາກທີIV
## ມາດຕະການປົກປ້ອງອຸດສາຫະກຳພາຍໃນ
### ໝວດທີ 1
### ປະເພດມາດຕະການປົກປ້ອງອຸດສາຫະກຳພາຍໃນ

**ມາດຕາ 25 ປະເພດ ມາດຕະການປົກປ້ອງອຸດສາຫະກຳພາຍໃນ**

ມາດຕະການປົກປ້ອງອຸດສາຫະກຳພາຍໃນມີສອງປະເພດ ດັ່ງນີ້:

1. ມາດຕະການປົກປ້ອງຊົ່ວຄາວ;
2. ມາດຕະການປົກປ້ອງທົ່ວໄປ.

**ມາດຕາ 26 ມາດຕະການປົກປ້ອງຊົ່ວຄາວ**

ການນຳໃຊ້ມາດຕະການປົກປ້ອງຊົ່ວຄາວ ແມ່ນ ການໃຫ້ຜູ້ນຳເຂົ້າສິນຄ້າວາງເງິນຄ້ຳປະກັນ ຈາກການຄິດໄລ່ຕາມການເພີ່ມອັດຕາພາສີ ໃນກໍລະນີທີ່ການສືບສວນກ່ຽວກັບຄວາມເສຍຫາຍຂອງອຸດສາຫະກຳພາຍໃນ ໂດຍອີງໃສ່ຜົນຂອງການສືບສວນເບື້ອງຕົ້ນ ວ່າມີຂໍ້ມູນຫຼັກຖານຈະແຈ້ງແລະຊີ້ໃຫ້ເຫັນວ່າ ຖ້າມີຄວາມຊັກຊ້າ

ແກ່ຍາວ ຈະສ້າງຄວາມເສຍຫາຍຮ້າຍແຮງຕໍ່ອຸດສາຫະກຳພາຍໃນ ຫຼື ເປັນໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຮ້າຍແຮງ ຕໍ່ອຸດສາຫະກຳພາຍໃນ.

**ມາດຕາ 27 ມາດຕະການປົກປ້ອງທົ່ວໄປ**

ການນຳໃຊ້ມາດຕະການປົກປ້ອງທົ່ວໄປ ແມ່ນການເພີ່ມອັດຕາ ພາສີຕໍ່ສິນຄ້ານຳເຂົ້າ ຫຼື ການກຳນົດປະລິມານການນຳເຂົ້າ ພາຍຫຼັງສຳເລັດການສືບສວນ ແລະ ຜົນການສືບສວນຢັ້ງຢືນວ່າການນຳເຂົ້າສິນຄ້າດັ່ງກ່າວນັ້ນ ໄດ້ສ້າງຄວາມເສຍຫາຍຮ້າຍແຮງ ຫຼື ເປັນໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຮ້າຍແຮງຕໍ່ອຸດສາຫະກຳພາຍໃນ.

**ມາດຕາ 28 ການບໍ່ ນຳໃຊ້ມາດຕະການປົກປ້ອງອຸດສາຫະກຳພາຍໃນ**

ມາດຕະການປົກປ້ອງອຸດສາຫະກຳພາຍໃນຈະບໍ່ນຳໃຊ້ ໃນກໍລະນີດັ່ງນີ້:

1. ສ່ວນແບ່ງການນຳເຂົ້າສິນຄ້າຈາກປະເທດກຳລັງພັດທະນາໃດໜຶ່ງ ທີ່ເປັນສະມາຊິກຂອງອົງການການຄ້າໂລກຫາກບໍ່ເກີນສາມສ່ວນຮ້ອຍ ຂອງການນຳເຂົ້າສິນຄ້າທັງໝົດທີ່ຖືກສືບສວນ ຫຼືສ່ວນແບ່ງການນຳເຂົ້າທັງໝົດຈາກປະເທດກຳລັງພັດທະນາລວມກັນ ຫາກບໍ່ເກີນເກົ້າສ່ວນຮ້ອຍ;
2. ລັດຖະບານ ຫາກເຫັນວ່າການນຳໃຊ້ມາດຕະການປົກປ້ອງນັ້ນ ຈະສ້າງຄວາມເສຍຫາຍຕໍ່ເສດຖະກິດ-ສັງຄົມພາຍໃນປະເທດ.ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງແຈ້ງໃຫ້ອົງການການຄ້າໂລກ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບກ່ຽວກັບການບໍ່ນຳໃຊ້ມາດຕະການດັ່ງກ່າວ.

## ໝວດທີ 2
## ການນຳໃຊ້ມາດຕະການປົກປ້ອງຊົ່ວຄາວ

**ມາດຕາ29 ການນຳໃຊ້ມາດຕະການປົກປ້ອງຊົ່ວຄາວ**

ໃນກໍລະນີທີ່ການສືບສວນ ກ່ຽວກັບຄວາມເສຍຫາຍຂອງອຸດສາຫະກຳພາຍໃນ ຫາກຍັງບໍ່ທັນສຳເລັດ, ຊັກຊ້າແກ່ຍາວ ຊຶ່ງຈະສ້າງຄວາມເສຍຫາຍຮ້າຍແຮງຕໍ່ອຸດສາຫະກຳພາຍໃນ ເຈົ້າໜ້າທີ່ສືບສວນ ມີສິດສະເໜີຕໍ່ ລັດຖະມົນຕີກະຊວງອຸດສາຫະກຳແລະການຄ້າ ເພື່ອນຳສະເໜີຕໍ່ລັດຖະບານ ພິຈາລະນາຕົກລົງນຳໃຊ້ມາດຕະການປົກປ້ອງຊົ່ວຄາວ. ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຄົ້ນຄວ້າກຳນົດ ຈຳນວນເງິນຄໍ້າປະກັນ ບົນພື້ນຖານການຄິດໄລ່ຈາກການເພີ່ມອັດຕາພາສີນຳເຂົ້າສິນຄ້າ.

ກະຊວງການເງິນ ເປັນຜູ້ຈັດຕັ້ງປະຕິບັດ ມາດຕະການປົກປ້ອງຊົ່ວຄາວ ພາຍຫຼັງທີ່ລັດຖະບານໄດ້ຕົກລົງນຳໃຊ້ມາດຕະການດັ່ງກ່າວ.

ກະຊວງອຸດສາຫະກຳແລະການຄ້າຕ້ອງແຈ້ງ ກ່ຽວກັບການນຳໃຊ້ມາດຕະການປົກປ້ອງຊົ່ວຄາວ ໃຫ້ອົງການການຄ້າໂລກ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບ.

**ມາດຕາ 30 ກຳນົດເວລາການນາໃຊ້ມາດຕະການປົກປ້ອງຊົ່ວຄາວ**

ກຳນົດເວລາການນຳໃຊ້ມາດຕະການປົກປ້ອງຊົ່ວຄາວບໍ່ໃຫ້ເກີນສອງຮ້ອຍວັນ ນັບແຕ່ວັນໄດ້ຕົກລົງນຳໃຊ້ມາດຕະການດັ່ງກ່າວເປັນຕົ້ນໄປ. ການນຳໃຊ້ມາດຕະການປົກປ້ອງຊົ່ວຄາວຈະສິ້ນສຸດລົງກໍຕໍ່ເມື່ອການສືບສວນກ່ຽວກັບຄວາມເສຍຫາຍຂອງອຸດສາຫະກຳພາຍໃນ ສຳເລັດ ແລະລັດຖະບານໄດ້ຕົກລົງນຳໃຊ້ ຫຼື

ບໍ່ນຳໃຊ້ມາດຕະການປົກປ້ອງທົ່ວໄປ.ລັດຖະບານມີສິດຕົກລົງຍົກເລີກການນຳໃຊ້ມາດຕະການປົກປ້ອງ ຊົ່ວຄາວກ່ອນກຳນົດເວລາກໍໄດ້.

**ມາດຕາ 31 ການສົ່ງເງິນຄ້ຳປະກັນຄືນ**

ພາຍຫຼັງສຳເລັດການສືບສວນ ແລະຖ້າຫາກເຫັນວ່າ ບໍ່ຈຳເປັນນຳໃຊ້ມາດຕະການປົກປ້ອງຊົ່ວຄາວ , ເງິນຄ້ຳປະກັນທີ່ເກັບຈາກການນຳໃຊ້ມາດຕະການຊົ່ວຄາວຕາມທີ່ລະບຸໄວ້ໃນມາດຕາ 26 ຂອງກົດໝາຍສະບັບນີ້ນັ້ນ ຕ້ອງສົ່ງຄືນໃຫ້ຜູ້ນຳເຂົ້າທັນທີ ພາຍຫຼັງລັດຖະບານໄດ້ຕົກລົງ.

## ໝວດທີ 3
## ການນຳໃຊ້ມາດຕະການປົກປ້ອງທົ່ວໄປ

**ມາດຕາ 32 ການນາໃຊ້ມາດຕະການປົກປ້ອງທົ່ວໄປ**

ມາດຕະການປົກປ້ອງທົ່ວໄປນຳໃຊ້ເມື່ອຜົນຂອງການສືບສວນຫາກຢັ້ງຢືນວ່າການນຳເຂົ້າສິນຄ້າທີ່ຖືກສືບສວນນັ້ນ ໄດ້ສ້າງຄວາມເສຍຫາຍຮ້າຍແຮງ ຫຼື ເປັນໄພຂົ່ມຂູ່ທີ່ຈະກໍ່ໃຫ້ເກີດຄວາມເສຍຫາຍຮ້າຍແຮງຕໍ່ອຸດສາຫະກຳພາຍໃນ. ກະຊວງອຸດສາຫະກຳແລະການຄ້າ ຕ້ອງສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຕົກລົງນຳໃຊ້ມາດຕະການປົກປ້ອງທົ່ວໄປ ດ້ວຍການເພີ່ມອັດຕາພາສີຕໍ່ສິນຄ້ານຳເຂົ້າ ຫຼື ການກຳນົດປະລິມານການນຳເຂົ້າ.

ໃນກໍລະນີ ການນຳໃຊ້ມາດຕະການເພີ່ມອັດຕາພາສີຕໍ່ສິນຄ້ານຳເຂົ້າລັດຖະບານຕ້ອງສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງເອົາການນຳໃຊ້ມາດຕະການດັ່ງກ່າວ ບົນພື້ນຖານການຄົ້ນຄວ້າຂອງ ກະຊວງອຸດສາຫະກຳ ແລະ ການຄ້າ.ກະຊວງການເງິນ ເປັນຜູ້ຈັດຕັ້ງປະຕິບັດ ມາດຕະການເພີ່ມອັດຕາພາສີນຳເຂົ້າ.

ສຳລັບການນຳໃຊ້ການຈຳກັດປະລິມານການນຳເຂົ້າ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຈັດຕັ້ງປະຕິບັດພາຍຫຼັງທີ່ລັດຖະບານໄດ້ຕົກລົງນຳໃຊ້ມາດຕະການດັ່ງກ່າວ. ການນຳໃຊ້ມາດຕະການຈຳກັດດ້ານປະລິມານນຳເຂົ້ານີ້ຕ້ອງບໍ່ເຮັດໃຫ້ປະລິມານການນຳເຂົ້າຫຼຸດລົງຕ່ຳກວ່າລະດັບສະເລ່ຍການນຳເຂົ້າໃນໄລຍະສາມປີສຸດທ້າຍ ກ່ອນການນຳໃຊ້ມາດຕະການດັ່ງກ່າວ ເວັ້ນເສຍແຕ່ມີເຫດຜົນວ່າ ລະດັບທີ່ນຳໃຊ້ນັ້ນ ຫາກແມ່ນເພື່ອສະກັດກັ້ນ ແລະ ແກ້ໄຂຜົນກະທົບທາງລົບຕໍ່ກັບອຸດສະຫະກຳພາຍໃນ.

ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງແຈ້ງ ກ່ຽວກັບການນຳໃຊ້ມາດຕະການປົກປ້ອງທົ່ວໄປໃຫ້ອົງການການຄ້າໂລກ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບພ້ອມທັງເຜີຍແຜ່ລົງໃນສື່ໃດໜຶ່ງ.

**ມາດຕາ33 ກຳນົດເວລາການນຳໃຊ້ມາດຕະການປົກປ້ອງທົ່ວໄປ**

ການນຳໃຊ້ມາດຕະການປົກປ້ອງທົ່ວໄປມີໄລຍະເວລາບໍ່ເກີນສີ່ປີລວມທັງໄລຍະເວລາໃນການນຳໃຊ້ມາດຕະການປົກປ້ອງຊົ່ວຄາວເວັ້ນເສຍແຕ່ມີການຕໍ່ເວລາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 35 ຂອງກົດໝາຍສະບັບນີ້.

**ມາດຕາ 34 ການທົບທວນຄືນມາດຕະການປົກປ້ອງທົ່ວໄປ**

ສຳລັບມາດຕະການປົກປ້ອງທົ່ວໄປ ທີ່ມີອາຍຸການນຳໃຊ້ເກີນກວ່າ ສາມປີ ກະຊວງອຸດສາຫະກຳ ແລະ ການຄ້າຕ້ອງທົບທວນມາດຕະການດັ່ງກ່າວ ພາຍຫຼັງໄດ້ນຳໃຊ້ໄດ້ເຄິ່ງໜຶ່ງຂອງອາຍຸການນຳໃຊ້ມາດຕະການ

ດັ່ງກ່າວ.ຈາກນັ້ນ ໃຫ້ກະກຽມບົດລາຍງານກ່ຽວກັບຜົນຂອງການທົບທວນ ເພື່ອຮັກສາ, ຫຼຸດຜ່ອນ ຫຼື ຖອນການນໍາໃຊ້ມາດຕະການດັ່ງກ່າວ. ພາຍຫຼັງໄດ້ທົບທວນແລ້ວ ຕ້ອງປະກາດຜ່ານສື່ຕ່າງໆ.

ຫຼັງຈາກໄດ້ນໍາໃຊ້ມາດຕະການປົກປ້ອງດັ່ງກ່າວ ເກີນກວ່າໜຶ່ງປີແລ້ວ ມາດຕະການດັ່ງກ່າວ ຕ້ອງພະຍາຍາມຫຼຸດຜ່ອນການຈໍາກັດເປັນແຕ່ລະໄລຍະ.

**ມາດຕາ 35 ການຕໍ່ໄລຍະເວລາຂອງການນໍາໃຊ້ມາດຕະການປົກປ້ອງ  ທົ່ວໄປ**

ຖ້າວ່າການປົກປ້ອງທົ່ວໄປຍັງມີຄວາມຈໍາເປັນ ເພື່ອສະກັດກັ້ນ ແລະ ແກ້ໄຂຄວາມເສຍຫາຍຕໍ່ອຸດສາຫະກໍາພາຍໃນ ແລະ ມີຫຼັກຖານວ່າອຸດສາຫະກໍານັ້ນ ມີແຜນປັບປຸງຕົນເອງ ສາມາດຕໍ່ໄລຍະເວລາການນໍາໃຊ້ມາດຕະການປົກປ້ອງທົ່ວໄປໄດ້ ຕາມການສະເໜີຂອງອຸດສາຫະກໍາພາຍໃນ ຫຼື ຂອງຕົວແທນອຸດສາຫະກໍາພາຍໃນ  ແຕ່ລວມອາຍຸການນໍາໃຊ້ທັງໝົດບໍ່ໃຫ້ເກີນ ສິບປີ ໃນນັ້ນມີ  ທັງອາຍຸການນໍາໃຊ້ມາດຕະການປົກປ້ອງຊົ່ວຄາວ, ມາດຕະການປົກປ້ອງທົ່ວໄປ ແລະ ໄລຍະເວລາຕໍ່ອາຍຸການນໍາໃຊ້.

ກະຊວງອຸດສາຫະກໍາແລະການຄ້າຕ້ອງແຈ້ງ ກ່ຽວກັບຕໍ່ອາຍຸການນໍາໃຊ້ມາດຕະການ ໃຫ້ອົງການການຄ້າໂລກ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບພ້ອມທັງເຜີຍແຜ່ລົງໃນສື່ໃດໜຶ່ງ.

**ມາດຕາ 36 ການນໍາໃຊ້ຄືນມາດຕະການປົກປ້ອງ  ທົ່ວໄປ**

ມາດຕະການປົກປ້ອງທົ່ວໄປ ຈະບໍ່ຖືກນໍາໃຊ້ອີກ ຕໍ່ສິນຄ້ານໍາເຂົ້າທີ່ໄດ້ຖືກມາດຕະການດັ່ງກ່າວມາກ່ອນ ຈົນກ່ວາໄລຍະເວລາທີ່ເທົ່າກັບໄລຍະເວລາຊຶ່ງເຄີຍນໍາໃຊ້ມາດຕະການນີ້ໄດ້ຜ່ານພົ້ນໄປ ແຕ່ໄລຍະເວລາການນໍາໃຊ້ມາດຕະການປົກປ້ອງ ຕ້ອງບໍ່ຕໍ່າກວ່າ ສອງປີ.

ຢ່າງໃດກໍຕາມ ອາດນໍາໃຊ້ມາດຕະການປົກປ້ອງທົ່ວໄປທີ່ມີໄລຍະເວລາ ຮ້ອຍແປດສິບວັນ ຫຼື ໜ້ອຍກວ່ານັ້ນໄດ້ ຖ້າວ່າເວລາໄດ້ຜ່ານໄປແລ້ວຢ່າງໜ້ອຍ ໜຶ່ງປີ ນັບແຕ່ວັນໄດ້ເລີ່ມນໍາໃຊ້ມາດຕະການປົກປ້ອງຕໍ່ສິນຄ້າທີ່ນໍາເຂົ້ານັ້ນ ແລະ ມາດຕະການດັ່ງກ່າວບໍ່ໄດ້ຖືກນໍາໃຊ້ກັບສິນຄ້າຊະນິດດຽວກັນເກີນກວ່າ ສອງ ຄັ້ງ ໃນໄລຍະເວລາຫ້າປີ ກ່ອນວັນເລີ່ມໃຊ້ມາດຕະການປົກປ້ອງທົ່ວໄປ.

## ພາກທີ V
## ຂໍ້ຫ້າມ

**ມາດຕາ 37  ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ , ນິຕິບຸກຄົນຫຼືການຈັດຕັ້ງ ມີພຶດຕິກໍາດັ່ງນີ້:

1. ໃຫ້ການຊ່ວຍເຫຼືອ,ປົກປ້ອງຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການປົກປ້ອງ  ອຸດສາຫະກໍາພາຍໃນ;
2. ເປັນສື່ກາງໃຫ້ ຫຼື ຮັບສິນບົນ ເພື່ອຜົນປະໂຫຍດຂອງຕົນ ,ບຸກຄົນອື່ນ ຫຼື ບຸກຄົນໃດໜຶ່ງ;

3. ຂັດຂວາງການເຮັດວຽກຂອງເຈົ້າໜ້າທີ່ສືບສວນ ໃນການປະຕິບັດວຽກງານສືບສວນຜົນກະທົບຈາກສິນຄ້ານຳເຂົ້າ;

4. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ38 ຂໍ້ຫ້າມສາລັບ ອຸດສາຫະກຳພາຍໃນ**

ຫ້າມ ອຸດສາຫະກຳພາຍໃນມີພຶດຕິກຳ ດັ່ງນີ້:

1. ປອມແປງ, ບິດເບືອນ ຫຼື ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;

2. ໃຫ້ສິນບົນແກ່ພະນັກງານ ແລະ ບຸກຄົນທີ່ກ່ຽວຂ້ອງກັບວຽກງານການປົກປ້ອງອຸດສາຫະກຳພາຍໃນທີ່ໄດ້ຮັບຜົນກະທົບຈາກສິນຄ້ານຳເຂົ້າ;

3. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 39 ຂໍ້ຫ້າມສາລັບເຈົ້າໜ້າທີ່ແລະພະນັກງານທີ່ກ່ຽວຂ້ອງ**

ຫ້າມເຈົ້າໜ້າທີ່ແລະພະນັກງານທີ່ກ່ຽວຂ້ອງ ມີພຶດຕິກາດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ;

2. ຮັບສິນບົນຈາກອຸດສາຫະກຳພາຍໃນ ຫຼື ຜູ້ທີ່ຫວັງຜົນປະໂຫຍດຈາກການປົກປ້ອງ ອຸດສາຫະກຳພາຍໃນ;

3. ເປີດເຜີຍເອກະສານທີ່ເປັນຄວາມລັບໂດຍບໍ່ໄດ້ຮັບອານຸຍາດຈາກລັດຖະບານ;

4. ແກ່ຍາວເວລາໃນການພິຈາລະນາເອກະສານຕ່າງໆ ໂດຍບໍ່ມີເຫດຜົນ ຫຼື ກົດໜ່ວງເອກະສານຂອງອຸດສາຫະກຳພາຍໃນ;

5. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

# ພາກທີVI
# ການຄຸ້ມຄອງ ແລະ ການກວດກາ

## ໝວດທີ 1
## ການຄຸ້ມຄອງວຽກງານການປົກປ້ອງອຸດສາຫະກຳພາຍໃນ

**ມາດຕາ 40 ອົງການຄຸ້ມຄອງວຽກງານການປົກປ້ອງອຸດສາຫະກຳພາຍໃນ**

ລັດຖະບານ ແຫ່ງ ສປປ ລາວ ຄຸ້ມຄອງວຽກງານການປົກປ້ອງ ອຸດສາຫະກຳໃນທີ່ໄດ້ຮັບຄວາມເສຍຫາຍຈາກການນຳເຂົ້າສິນຄ້າຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າເປັນອົງການຮັບຜິດຊອບໂດຍກົງ ແລະ ເປັນໃຈກາງໃນການປະສານສົມທົບກັບກະຊວງການເງິນ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານປົກປ້ອງອຸດສາຫະກຳພາຍໃນທີ່ໄດ້ຮັບຜົນກະທົບຈາກສິນຄ້ານຳເຂົ້າປະກອບດ້ວຍ:

1. ກະຊວງອຸດສາຫະກຳ ແລະ ການຄ້າ;
2. ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;

3. ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 41 ສິດ ແລະ ໜ້າທີ່ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

ໃນການຄຸ້ມຄອງວຽກງານປົກປ້ອງຜູ້ອຸດສາຫະກຳພາຍໃນ ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານການປົກປ້ອງ ອຸດສາຫະກຳພາຍໃນ ເພື່ອສະເໜີລັດຖະບານພິຈາລະນາ ;
2. ສະເໜີລັດຖະບານ ພິຈາລະນາ ຕົກລົງນຳໃຊ້ ມາດຕະການປົກປ້ອງອຸດສາຫະກຳພາຍໃນ ຕາມທີ່ກຳນົດໄວ້ໃນກົດໝາຍສະບັບນີ້;
3. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍກ່ຽວກັບວຽກງານປົກປ້ອງ ອຸດສາຫະກຳພາຍໃນມາເປັນແຜນການ , ແຜນງານ ແລະ ໂຄງການລະອຽດຂອງຕົນພ້ອມທັງຊີ້ນຳຕິດຕາມ , ຊຸກຍູ້ການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;
4. ໂຄສະນາ, ເຜີຍແຜ່ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ແຜນການກ່ຽວກັບວຽກງານປົກປ້ອງອຸດສາຫະກຳພາຍໃນ ;
5. ອອກຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ກ່ຽວກັບວຽກງານປົກປ້ອງ ອຸດສາຫະກຳພາຍໃນ ທີ່ໄດ້ຮັບຄວາມເສຍຫາຍຈາກການນຳເຂົ້າສິນຄ້າ;
6. ສ້າງ, ບຳລຸງ ແລະ ຍົກລະດັບ ພະນັກງານວິຊາການກ່ຽວກັບວຽກງານການປົກປ້ອງ ອຸດສາຫະກຳພາຍໃນ;
7. ປຶກສາຫາລື ແລະ ປະສານສົມທົບກັບ ບັນດາກະຊວງ , ອົງການທຽບເທົ່າ ແລະ ຂະແໜງການອື່ນ;
8. ພົວພັນຮ່ວມມື ແລະ ແລກປ່ຽນປະສົບການກັບສາກົນ ກ່ຽວກັບວຽກງານການປົກປ້ອງ ອຸດສາຫະກຳພາຍໃນ ;
9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ກ່ຽວກັບປົກປ້ອງ ອຸດສາຫະກຳພາຍໃນຕໍ່ລັດຖະບານຢ່າງເປັນປົກກະຕິ;
10. ໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

**ມາດຕາ 42 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະການຄ້າແຂວງ , ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານປົກປ້ອງປົກປ້ອງ ອຸດສາຫະກຳພາຍໃນ ທີ່ໄດ້ຮັບຄວາມເສຍຫາຍຈາກການນຳເຂົ້າສິນຄ້າ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ , ນະຄອນຫຼວງ ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ , ແຜນຍຸດທະສາດ , ກົດໝາຍ , ລະບຽບການ ແລະ ແຜນດຳເນີນງານ ກ່ຽວກັບວຽກງານການປົກປ້ອງອຸດສາຫະກຳພາຍໃນ ;
2. ໂຄສະນາເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ແຜນການກ່ຽວກັບ ວຽກງານການປົກປ້ອງອຸດສາຫະກຳພາຍໃນໃຫ້ແກ່ສັງຄົມ;
3. ອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມື ແກ່ເຈົ້າໜ້າທີ່ສືບສວນ ໃນການຈັດຕັ້ງປະຕິບັດວຽກງານປົກປ້ອງອຸດສາຫະກຳພາຍໃນ;

4. ຮັບການສະເໜີ ແລະ ການແຈ້ງຂໍ້ມູນ ກ່ຽວກັບວຽກງານການ ປົກປ້ອງອຸດສາຫະກຳພາຍໃນ ຈາກອຸດສາຫະກຳພາຍໃນ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ເພື່ອລາຍງານລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າພິຈາລະນາແກ້ໄຂ;

5. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານການປົກປ້ອງປົກປ້ອງ ອຸດສາຫະກຳພາຍໃນ ໃຫ້ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຫຼື ຕາມການມອບໝາຍ.

**ມາດຕາ 43 ສິດ ແລະ ໜ້າທີ່ຂອງຫ້ອງການອຸດສາຫະກຳແລະການຄ້າ ເມືອງ , ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານປົກປ້ອງ ອຸດສາຫະກຳພາຍໃນ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດແຜນການ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳຂອງຂັ້ນເທິງກ່ຽວກັບວຽກງານການປົກປ້ອງອຸດສາຫະກຳພາຍໃນ;

2. ເຜີຍແຜ່ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານ ປົກປ້ອງ ອຸດສາຫະກຳພາຍ ພາຍໃນ ເມືອງ, ເທດສະບານ ຂອງຕົນ;

3. ອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມື ແກ່ເຈົ້າໜ້າທີ່ ສືບສວນ ໃນການຈັດຕັ້ງປະຕິບັດວຽກງານປົກປ້ອງອຸດສາຫະກຳພາຍໃນ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຫຼື ຕາມການມອບໝາຍ.

**ມາດຕາ 44 ສິດ ແລະ ໜ້າທີ່ຂອງກະຊວງການເງິນ**

ໃນການຄຸ້ມຄອງວຽກງານການປົກປ້ອງ ອຸດສາຫະກຳພາຍໃນ, ກະຊວງການເງິນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍກ່ຽວກັບວຽກງານການປົກປ້ອງ ອຸດສາຫະກຳພາຍໃນ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນພ້ອມທັງຊີ້ນຳຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;

2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ, ແຜນການກ່ຽວກັບວຽກງານການປົກປ້ອງອຸດສາຫະກຳພາຍໃນ ;

3. ອອກຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ກ່ຽວກັບວຽກງານການປົກປ້ອງອຸດສາຫະກຳພາຍໃນ ;

4. ຈັດຕັ້ງປະຕິບັດມາດຕະການປົກປ້ອງອຸດສາຫະກຳພາຍໃນການຕົກລົງຂອງລັດຖະບານ;

5. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ກ່ຽວກັບການປົກປ້ອງ ອຸດສາຫະກຳພາຍໃນທີ່ໄດ້ຮັບຄວາມເສຍຫາຍຈາກການນຳເຂົ້າສິນຄ້າຕໍ່ລັດຖະບານຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມອບໃຫ້ລັດຖະມົນຕີ ກະຊວງການເງິນ ຄົ້ນຄວ້າ ແລະ ມອບວຽກໃຫ້ພະແນກການເງິນ , ແຂວງ, ນະຄອນຫຼວງ, ຫ້ອງການການເງິນເມືອງ, ເທດສະບານ ຕາມຄວາມເໝາະສົມ.

**ມາດຕາ 45 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ**

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ໃຫ້ການຮ່ວມມື ແລະ ປະສານສົມທົບກັບຂະແໜງອຸດສາຫະກຳ ແລະ ການຄ້າ ໃນການເຄື່ອນໄຫວວຽກງານການປົກປ້ອງ ອຸດສາຫະກຳພາຍໃນຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານການປົກປ້ອງອຸດສາຫະກຳພາຍໃນ

**ມາດຕາ 46 ອົງການກວດກາວຽກງານການປົກປ້ອງອຸດສາຫະກຳພາຍໃນ**

ອົງການກວດກາວຽກງານການປົກປ້ອງອຸດສາຫະກຳພາຍໃນມີດັ່ງນີ້:

1.ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານການປົກປ້ອງອຸດສາຫະກຳພາຍໃນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 40 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ແມ່ນສະພາແຫ່ງຊາດ , ອົງການກວດກາລັດຖະບານ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ສື່ມວນຊົນ ເປັນຜູ້ກວດກາການຈັດຕັ້ງປະຕິບັດວຽກງານການປົກປ້ອງອຸດສາຫະກຳພາຍໃນຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 47 ເນື້ອໃນການກວດກາວຽກງານການປົກປ້ອງອຸດສາຫະກຳພາຍໃນ**

ການກວດກາວຽກງານການ ປົກປ້ອງອຸດສາຫະກຳພາຍໃນມີເນື້ອໃນຕົ້ນຕໍດັ່ງນີ້:

1. ການຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານການປົກປ້ອງອຸດສາຫະກຳພາຍໃນ;

2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງປະຕິບັດ ແລະ ອົງການຄຸ້ມຄອງວຽກງານການປົກປ້ອງອຸດສາຫະກຳພາຍໃນ;

3. ຄວາມຮັບຜິດຊອບ, ການປະພຶດ ແລະ ແບບແຜນວິທີເຮັດວຽກຂອງພະນັກງານ ແລະ ເຈົ້າໜ້າທີ່ກວດກາວຽກງານການປົກປ້ອງອຸດສາຫະກຳພາຍໃນ.

**ມາດຕາ 48 ຮູບການກວດກາວຽກງານການປົກປ້ອງອຸດສາຫະກຳພາຍໃນ**

ຮູບການ ການກວດກາວຽກງານການ ປົກປ້ອງອຸດສາຫະກຳພາຍໃນມີດັ່ງນີ້:

1. ການກວດກາປົກກະຕິ ແມ່ນການກວດກາທີ່ດຳເນີນໄປຕາມແຜນການ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າຢ່າງໜ້ອຍຊາວສີ່ຊົ່ວໂມງ;

3. ການກວດກາແບບກະທັນຫັນ ແມ່ນການກວດການອກແຜນການ , ມີຄວາມຈຳເປັນຮີບດ່ວນໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດຳເນີນການກວດກາວຽກງານການປົກປ້ອງອຸດສາຫະກຳພາຍໃນແຕ່ລະຄັ້ງນັ້ນ ໃຫ້ກວດກາທັງເອກະສານ ແລະ ລົງກວດກາຕົວຈິງຢູ່ສະຖານທີ່ເຮັດວຽກ ພ້ອມທັງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

# ພາກທີ VII
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ49 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຮັບຜິດຊອບວຽກງານການປົກປ້ອງປົກປ້ອງອຸດສາຫະກຳ ພາຍໃນທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບກົດໝາຍ.

**ມາດຕາ 50 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດຕາມກົດໝາຍອາຍາ ແລ້ວແຕ່ກໍລະນີໜັກ ຫຼື ເບົາ.

# ພາກທີ VIII
# ບົດບັນຍັດສຸດທ້າຍ

**ມາດຕາ51 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍ ສະບັບນີ້.

**ມາດຕາ 52 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ວັນປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ລ້ວນແລ້ວແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**